## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 21 ກຸມພາ 2021 (02-21-2021)

---

## ການເຊື່ອມຕໍ່ກັບພຣະກາຍພຣະຄຣິດ.

*ການທີ່ໄດ້ເປັນພາກສ່ວນຂອງກຸ່ມຊ່ວຍໃຫ້ທ່ານປະສົບຄວາມສຳເລັດແທ້ໆເມື່ອໃດ?*

**ຈຸດສຳຄັນໃນບົດຮຽນ:** ການເຕີບໂຕດ້ານຈິດວິນຍານຮຽກເອີ້ນໃຫ້ມີການພົວພັນເປັນປະຈຳກັບຜູ້ເຊື່ອອື່ນໆ ແລະຮັບໃຊ້ພວກເຂົາເຈົ້າເຫຼົ່ານັ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃນເດືອນ ເມສາ 1970, ອາໂປລໂລ 13 (Apollo 13) ໄດ້ມຸ່ງໜ້າສູ່ດວງຈັນໃນຂນະທີ່ພັຍພິບັດໄດ້ເກີດຂຶ້ນ. ຖັງອາກາດອົກຊີເຢັນ(oxygen tank)ໄດ້ແຕກລະເບີດເປັນເຫດໃຫ້ອົງການນາຊາ(NASA)ຍົກເລີກພາຣະກິດດັ່ງກ່າວ. ເພື່ອເປັນການປະຢັດພລັງງານ(ເຊື້ອເພີງ)ທີ່ຈຳເປັນເພື່ອການກັບສູ່ໂລກພາຍຫຼັງ, ພວກນັກອາວະກາດໄດ້ຍ້າຍຈາກໂມດູນບໍຣິການ(Service Module)ໄປສູ່ໂມດູນດວງຈັນ(Lunar Module). ນີ້ໄດ້ສ້າງບັນຫາໃໝ່ຂຶ້ນມາ. ໂມດູນດວງຈັນໄດ້ອອກແບບສ້າງຂຶ້ນສຳລັບນັກອາວະກາດພຽງແຕ່ສອງຄົນເທົ່ານັ້ນ ແລະບໍ່ມີອາກາດພຽງພໍສຳລັບສາມຄົນຊົ່ວການເດີນທາງກັບບ້ານ. ລະດັບຄາບອນໄດອອົກໄຊ(carbon dioxide–$CO_2$)ສູງຂຶ້ນຈະເປັນອັນຕລາຍຕໍ່ຊີວິດເຂົາເຈົ້າ. ພວກນັກອາວະກາດຈຳເປັນຕ້ອງໄດ້ປຸ່ງນໝໍ້ກັ່ນຕອງ$CO_2$ເພື່ອທຳຄວາມສະອາດອາກາດ, ແຕ່ໝໍ້ກັ່ນຕອງໜ່ວຍດຽວທີ່ມີໄວ້ສຳລອງ (spare) ແມ່ນເພື່ອໂມດູນບໍຣິການ ບໍ່ແມ່ນເພື່ອໂມດູນດວງຈັນ. ທີ່ພື້ນດິນ, ອົງການນາຊາໄດ້ຄວາມຄິດປະດິດສ້າງໃຫ້ປະກອບໝໍ້ກັ່ນຕອງ$CO_2$ໂດຍການໃຊ້ສິ້ນສ່ວນ(parts)ທີ່ພວກເພິ່ນຮູ້ວ່ານັກ ອາວະກາດມີຢູ່ໃນມື. ຄຳແນະນຳການປະກອບໄດ້ສົ່ງຂຶ້ນໄປແລະບັນດານັກອາວະກາດໄດ້ປະກອບໝໍ້ກັ່ນຕອງ$CO_2$ ນັ້ນສຳເລັດຜົນ. ໄດ້ຜົນດີແລະນັກອາວະກາດທັງສາມຄົນໄດ້ລອດຊີວິດ. **ບໍ່ມີຜູ້ນຶ່ງຜູ້ໃດໄດ້ຮັບເຄຣດິດຈາກສິ່ງນີ້. ມັນ**ແມ່ນການປະສານງານຈາກນັກວິສວະກອນ(Engineers) ແລະ ນັກວິຊາການ(Tech-nicians)ຫຼາຍຄົນໄດ້ຮ່ວມມືປະສານງານກັນເພື່ອໃຫ້ພົບຄຳຕອບແກ້ໄຂບັນຫານັ້ນໃຫ້ສຳເລັດເພື່ອຊ່ວຍຊີວິດມະນຸດ.

ການເຕີບໂຕດ້ານຈິດວິນຍານຂອງພວກເຮົາກໍ່ເປັນເຊັ່ນດຽວກັນ. *<u>ພວກເຮົາຈຳເປັນຕ້ອງການ ການອຸປຖັມຄ້ຳຊູແລະແນວຄິດປະດິດສ້າງຈາກຄົນອື່ນ-ແລະ ພວກເພິ່ນກໍ່ຈຳເປັນຕ້ອງການຢ່າງນັ້ນຈາກພວກເຮົາເຊັ່ນດຽວກັນ.</u>*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>1 ໂກຣິນໂທ 12:12-13</u>

*12 ເຖິງວ່າຮ່າງກາຍເປັນອັນດຽວ ກໍຍັງມີອະວັຍວະຫຼາຍສ່ວນແລະອະວັຍວະເຫຼົ່ານັ້ນ ແມ່ນຈະມີຫຼາຍສ່ວນກໍຍັງເປັນກາຍດຽວກັນສັນໃດ ພຣະຄຣິດກໍຊົງເປັນສັນນັ້ນ. 13 ເພາະວ່າເຖິງແມ່ນພວກເຮົາຈະເປັນຊາດຢິວ, ຫຼືຄົນຕ່າງຊາດກໍດີ, ເປັນຂ້ອຍຂ້າຫຼືເປັນອິສຣະກໍດີ, ເຮົາທັງຫຼາຍໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວຈຶ່ງເຂົ້າເປັນກາຍອັນດຽວກັນແລະພຣະວິນຍານອົງດຽວກໍຊົງຊວ່ານຢູ່.*

ອັຄສາວົກໂປໂລເນັ້ນໜັກໃນພຣະຄັມພີຊ່ວງນີ້ແມ່ນແຈ່ມແຈ້ງ ແລະເພິ່ນບໍ່ປາຖນາໃຫ້ພວກເຮົາພາດສິ່ງນີ້. ຮ່າງກາຍຂອງຄົນເຮົານີ້ແມ່ນສ່ວນນຶ່ງສ່ວນດຽວກັນເຖິງແມ່ນວ່າມັນປະກອບດ້ວຍອະວັຍວະຫຼາຍສ່ວນ. ເພິ່ນໄດ້ເວົ້າຊ້ຳແນວຄິດໂດຍການໃຊ້ຄຳເວົ້າແລະໂຄງສ້າງທີ່ແຕກຕ່າງກັນເລັກນ້ອຍ, ຈັດຮຽງຂໍ້ໂຕ້ແຍ່ງ ຂອງລາວເພື່ອເຮັດໃຫ້ເປັນໜ້າສົນໃຈແກ່ຜູ້ຟັງ.

ຄຣິສຕຈັກ, ກໍ່ປຽບເໝືອນຮ່າງກາຍຂອງຄົນ, ມີຫຼາຍພາກສ່ວນຫຼືຫຼາຍສະມາຊິກ. ແຕ່ລະສະມາຊິກເປັນເອກກະລັກໃນດ້ານນິສັຍໃຈຄໍ, ເບື້ອງຫຼັງ, ແລະພອນສວັນແຫ່ງຈິດວິນຍານ, ແຕ່ພວກເຂົາເຈົ້າຮວມ ເປັນ<u>ກາຍດຽວກັນ</u>. ຄວາມເປັນຫຼາຍຫຼາກນີ້ບໍ່ໄດ້ເປັນອຸປສັກຂອງເອກພາບ(ສາມັກຄີ). ທີ່ຈິງແລ້ວ, ຄວາມ ແຕກຕ່າງ(ຫຼາກຫຼາຍ)ນີ້ເປັນສິ່ງທີ່ຈຳເປັນຂອງການເຮັດວຽກ. ອັຄສາວົກໂປໂລໄດ້ເຕືອນໄວ້ວ່າບັນດາສະມາຊິກໄດ້ເຂົ້າຮ່ວມບັບຕິສະມາເຂົ້າເປັນກາຍດຽວກັນ. ໃນຂນະທີ່ບັນດາຜູ້ເຊື່ອໄດ້ມາຈາກຫຼາຍຊົນຊາດຊົນເຜົ່າ, ຫຼາຍວັທນະທັມ, ຫຼາຍລະດັບເສຖກິດ-ສັງຄົມ, ຄວາມແຕກຕ່າງຂອງພວກເຮົາບໍ່ໄດ້ເປັນພັຍຂົ່ມຂູ່ຕໍ່ຄວາມສົມບູນຂອງຄຣິສຕະຈັກ. **<u>ພວກເຮົາເປັນນຶ່ງດຽວ</u>.** ການມາຈາກຫຼາກຫຼາຍເບື້ອງຫຼັງຂອງພວກເຮົາບໍ່ໄດ້ໝາຍຄວາມວ່າພວກເຮົາ<u>ເປັນເໝືອນກັນໝົດ</u>-ແຕ່ວ່າພວກເຮົາເຂົ້າເປັນພາກສ່ວນຂອງກາຍດຽວກັນ-ຄືພຣະ**ກາຍຂອງອົງພຣະຄຣິດ.** ໃນພຣະຄັມພີພຣະສັນຍາໃໝ່, ບັບຕິສະມາແມ່ນອີງໃສ່ການທີ່ບຸກຄົນນຶ່ງໄດ້ມຸດທົວລົງໄປໃນນ້ຳ. ໃນພຣະຄັມພີວັກນີ້, ທ່ານໂປໂລບໍ່ໄດ້ເລັງເຖິງການບັບຕິສະມາດ້ວຍນ້ຳ; ແທນທີ່ຈະເປັນແນວນັ້ນ, ທ່ານໄດ້ໃຊ້ຄຳເວົ້າແບບປຽບທຽບເພື່ອສະແດງໃຫ້ເຫັນວ່າ ຄຣິສຕະຈັກໄດ້ມຸດລົງໄປໃນພຣະວິນຍານ. *ພວກເຮົາໄດ້ຮັບການຄຸ້ມຄອງໂດຍພຣະວິນຍານບໍຣິສຸດ.* ແຕ່ວ່າທ່ານໂປໂລບໍ່ໄດ້ຢຸດຢູ່ພຽງແຕ່ຄຳເວົ້າທີ່ເປັນຮູບພາບນັ້ນ: ມັນບໍ່ແມ່ນພຽງແຕ່ພຣະວິນຍານບໍຣິສຸດຊົງປົກຄຸມຄຣິສຕະຈັກເທົ່ານັ້ນ, ແຕ່ພຣະວິນຍານບໍຣິສຸດຍັງຊົງສະຖິດຢູ່ພາຍໃນແຕ່ລະສະມາຊິກຂອງຄຣິສຕະຈັກເຊັ່ນດຽວກັນ. <u>ພຣະວິນຍານບໍຣິສຸດຂອງອົງພຣະເຈົ້າຊົງເຮັດໃຫ້ພວກເຮົາເປັນນຶ່ງດຽວພວກເຮົາແຕ່ລະຄົນເຕັມລົ້ນດ້ວຍພຣະວິນຍານບໍຣິສຸດ ແລະໄດ້ຖືກເຂົ້າຮ່ວມເປັນອັນນຶ່ງອັນດຽວກັນ</u>.

| |
|---|
| ແມ່ນຫຍັງຄືຜົນປໂຍດຂອງການເປັນນຶ່ງດຽວກັນພາຍໃນຄຣິສຕະຈັກ? |

## 2. <u>1 ໂກຣິນໂທ 12:14-18</u>

*[14] ເພາະວ່າຮ່າງກາຍນັ້ນບໍ່ໄດ້ປະກອບດ້ວຍອະວັຍວະອັນດຽວແຕ່ໄດ້ປະກອບດ້ວຍອະວັຍວະຫລາຍອັນ.[15] ຖ້າຕີນຈະກ່າວວ່າ, "ເພາະຂ້ອຍບໍ່ໄດ້ເປັນມືຂ້ອຍຈຶ່ງບໍ່ໄດ້ເປັນສ່ວນໃດໃນອະວັຍວະຂອງຮ່າງກາຍນັ້ນ"ແລ້ວຕີນຈະບໍ່ເປັນສ່ວນໃດໃນອະວັຍວະຂອງຮ່າງກາຍເພາະເຫດເວົ້າຢ່າງນັ້ນກໍບໍ່ໄດ້.[16] ຖ້າຫູຈະກ່າວວ່າ, "ເພາະຂ້ອຍບໍ່ໄດ້ເປັນຕາຂ້ອຍຈຶ່ງບໍ່ໄດ້ເປັນສ່ວນໃດໃນອະວັຍວະຂອງຮ່າງກາຍນັ້ນ"ຫູຈະບໍ່ໄດ້ເປັນສ່ວນໃດໃນອະວັຍວະຂອງຮ່າງກາຍເພາະເຫດເວົ້າຢ່າງນັ້ນກໍບໍ່ໄດ້.[17] ຖ້າອະວັຍວະທັງໝົດໃນຮ່າງກາຍເປັນຕາການໄດ້ຍິນຈະຢູ່ໃສຖ້າຮ່າງກາຍທັງໝົດເປັນຫູການດົມກິ່ນຈະຢູ່ໃສ.[18] ແຕ່ພຣະເຈົ້າໄດ້ຊົງຕັ້ງອະວັຍວະທຸກສ່ວນໄວ້ໃນຮ່າງກາຍຕາມຊອບພຣະທັຍຂອງພຣະອົງ.*

ຄວາມເປັນເອກະພາບຂອງຮ່າງກາຍບໍ່ໄດ້ໝາຍເຖິງລັກສະນະທີ່ເປັນແບບດຽວກັນຖ້ວນກາງອະວັຍວະທຸກສ່ວນ. ຮ່າງກາຍຂອງຄົນປະກອບດ້ວຍອະວັຍວະຫຼາຍສ່ວນແລະທັງໝົດແມ່ນສຳຄັນຕໍ່ໜ້າທີ່ຂອງໃຜມັນໂດຍສ່ວນຮວມ. ອະວັຍວະແຕ່ລະອັນປະກອບສ່ວນເຂົ້າໃນສຸຂພາບແລະໜ້າທີ່ຂອງຮ່າງກາຍເໝືອນດັ່ງດຽວກັບອະວັຍວະອື່ນໆຂອງຮ່າງກາຍຊຶ່ງມີໜ້າທີ່ປະຕິບັດວຽກງານໂດຍຈຳເພາະຂອງຕົນເພື່ອຜົນປະໂຍດຂອງຮ່າງກາຍນັ້ນ. ເໝືອນດັ່ງທີ່ອະວັຍວະທຸກສ່ວນຂອງຮ່າງກາຍມີບົດບາດແລະໜ້າທີ່ເປັນເອກກະລັກຂອງຕົວເອງ, ແຕ່ລະສະມາຊິກຂອງຄຣິສຕະຈັກຮັບໃຊ້ໜ້າທີ່ໃນຄວາມຮັບຜິດຊອບຂອງຕົນ. ເພື່ອໃຫ້ຄຣິສຕະຈັກທັງໝົດປະກອບພາຣະກິດໃຫ້ໄດ້ຜົນດີ, ແຕ່ລະສະມາຊິກຂອງຄຣິສຕະຈັກນັ້ນຈຳເປັນຕ້ອງເຮັດໃຫ້ບົດບາດແລະໜ້າທີ່ຄວາມຮັບຜິດຊອບຂອງຕົນນັ້ນສຳເລັດໃນວິທີການທີ່ສອດຄ່ອງກັບພອນສວັນທີ່ພຣະເຈົ້າໄດ້ຊົງປະທານໃຫ້ນັ້ນ. (ໂປໂລ ໄດ້ໃຫ້ພາກສ່ວນນຶ່ງໃນບັນຊີຂອງພອນສວັນດັ່ງກ່າວນັ້ນໃນຂໍ້ 4-10). ໃນຂນະທີ່ຮັບໃຊ້ໃນບົດບາດຈຳເພາະ ນຳມາຊຶ່ງເອກກະລັກແຫ່ງຄວາມຮັບຜິດຊອບ, ແລະທຸກໆຄົນຮັບໃຊ້ໂດຍອີງຕາມພອນສວັນຂອງຕົນ, ພວກເຮົາແບ່ງປັນຄວາມຮັບຜິດຊອບທັງຫຼາຍເຫຼົ່ານັ້ນ. <u>ຕົວຢ່າງ:</u> ທຸກໆສະມາຊິກໃນຄຣິສຕະຈັກຕ້ອງອະທິຖານເພື່ອສະມາຊິກຄົນອື່ນໆ (ຢາກບ 5:16); ແລະຕ້ອງຖວາຍແລະອຸປຖັມ

ຄ້ຳຊູພັນທະກິດຂອງຄຣິສຕະຈັກ (1 ກຣທ 16:2); ແລະ**<u>ພວກເຮົາທັງໝົດ</u>**ໄດ້ຖືກຮຽກເອີ້ນໃຫ້ແບ່ງປັນຄວາມເຊື່ອຂອງພວກເຮົາ ແລະສ້າງຄົນອື່ນໃຫ້ກັບກາຍມາເປັນສາວົກຂອງອົງພຣະເຢຊູ (ມທ 28:10-20). ຄຣິສຕະຈັກ, ດັ່ງດຽວກັບຮ່າງກາຍຂອງຄົນ, ປະກອບດ້ວຍສະມາຊິກ (ອະວັຍວະ) ຫຼາຍສ່ວນທີ່ມີໜ້າທີ່ບົດບາດຕ່າງກັນແລະມີຄວາມຮັບຜິດຊອບເປັນເອກກະລັກຂອງໃຜມັນ, ແຕ່ວ່າບໍ່ມີສະມາຊິກຄົນໃດ(ອະວັຍວະໃດ)ສາມາດເຮັດງານໄດ້ຢ່າງມີປະສິດທິພາບໂດຍປາສຈາກສະມາຊິກ (ອະວັຍວະ) ສ່ວນທີ່ເຫຼືອຂອງຄຣິສຕະຈັກ(ຮ່າງກາຍ)ນັ້ນໆ. ແມ້ກະທັ້ງບຸກຄົນທີ່ຮັບໃຊ້ໃນໜ້າທີ່ໆໂດດເດັ່ນຫຼືມອງເຫັນໄດ້ເຊັ່ນສິດຍາພິບານ ແລະຜູ້ນຳຄຣິສຕະຈັກກໍຍັງບໍ່ສາມາດປະຕິບັດວຽກງານໃຫ້ມີປະສິດທິພາບໄດ້ ໂດຍປາສຈາກພັນທະກິດຂອງຄຣິສຕະຈັກໂດຍສ່ວນໂຮມ. *<u>ຄຣິສຕະຈັກທີ່ມີປະສິດທິຜົນເຮັດໃຫ້ທຸກຄົນເຮັດວຽກຮ່ວມກັນເພື່ອສາເຫດຂອງພຣະຄຣິດ.</u>*

| |
|---|
| *ແມ່ນຫຍັງຄືອັນຕະລາຍໃນການສົມທຽບເຮົາເອງແລະພອນສວັນຂອງເຮົາກັບຄົນອື່ນໃນຄຣິສຕະຈັກ?* |

## 3. <u>1 ໂກຣິນໂທ12:19-24</u>

*[19]ຖ້າອະວັຍວະທຸກສ່ວນໃນຮ່າງກາຍເປັນອັນດຽວກັນຮ່າງກາຍຈະມີຢູ່ໃສ.[20]ທີ່ຈິງມີອະວັຍວະຫຼາຍອັນແຕ່ຍັງ
ເປັນຮ່າງກາຍອັນດຽວກັນ. [21]ຕາຈະເວົ້າແກ່ມືວ່າ, "ຂ້ອຍບໍ່ຕ້ອງການເຈົ້າ"ກໍບໍ່ໄດ້ຫລືຫົວຈະເວົ້າແກ່ຕີນວ່າ,
"ຂ້ອຍບໍ່ຕ້ອງການເຈົ້າ"ກໍບໍ່ໄດ້ຫຼືຫົວຈະເວົ້າແກ່ຕີນວ່າ, "ຂ້ອຍບໍ່ຕ້ອງການເຈົ້າ" ກໍບໍ່ໄດ້. [22]ທີ່ຈິງອະວັຍວະ
ສ່ວນທີ່ເຮົາເຫັນວ່າອ່ອນແອເຮົາກໍຂາດເສັຽບໍ່ໄດ້.[23]ແລະອະວັຍວະສ່ວນທີ່ເຮົາຖືວ່າມີກຽດນ້ອຍເຮົາກໍຍັງເຮັດ
ໃຫ້ມີກຽດຫຼາຍຂຶ້ນແລະອະວັຍວະສ່ວນທີ່ບໍ່ໜ້າເບິ່ງນັ້ນເຮົາກໍເຮັດໃຫ້ເປັນໜ້າເບິ່ງຫຼາຍຂຶ້ນ.[24]ແຕ່ສ່ວນອະວັຍ
ວະທີ່ໜ້າຊົມຢູ່ແລ້ວກໍບໍ່ຈຳເປັນຕ້ອງຕົກແຕ່ງອີກແຕ່ພຣະເຈົ້າໄດ້ຊົງປັ້ນດານໃຫ້ອະວັຍວະທຸກສ່ວນເຂົ້າເປັນ
ອັນດຽວກັນ, ຊົງໃຫ້ອະວັຍວະທີ່ຕ່ຳຕ້ອຍໄດ້ຮັບຄວາມນັບຖືຫຼາຍຂຶ້ນ.*

ຄຳສອນຂອງໂປໂລກ່ຽວກັບ"<u>ຄວາມເປັນນຶ່ງທ່າມກາງຄວາມຫຼາກຫຼາຍ</u>" (<u>unity in diversity</u>) ບໍ່ແມ່ນການໃຊ້ແບບສົມມຸດຕິຖານ. ຄຣິສຕະຈັກໃນເມືອງໂກຣິນໂທຖືກຂຸດໂຊມລົງ, ເຕັມໄປດ້ວຍຄວາມແຕກແຍກ. ຄຣິສຕະຈັກແຫ່ງນີ້ຕ້ອງການຄວາມສາມັກຄີຢ່າງຍິ່ງ. ຕັນຫາ (ຄວາມຢາກຝ່າຍເນື້ອໜັງ) ແລະຄວາມແຕກແຍກເຮັດໃຫ້ຄຣິສຕະຈັກເມືອງໂກຣິນໂທພັງທະລາຍລົງ. ໃນສະພາບການນັ້ນ, ໂປໂລໄດ້ກ່າວເນັ້ນໜັກວ່າທຸກໆສະມາຊິກຂອງຄຣິສຕະຈັກແມ່ນມີຄວາມຈຳເປັນ, ແລະຕ້ອງໄດ້ຮັບການຍອມຮັບວ່າ<u>ເປັນພາກສ່ວນທີ່ສຳຄັນຂອງຮ່າງກາຍຂອງພຣະຄຣິດ-ຄືຄຣິສຕະຈັກ.</u> ຄວາມຫຼາກຫຼາຍໃນຮ່າງກາຍແມ່ນສິ່ງຈຳເປັນ, ແຕ່ຄວາມຫຼາກຫຼາຍບໍ່ສົມຄວນຈະນຳໄປສູ່ຄວາມແຕກແຍກ. ໂປໂລໃຫ້ຄວາມສຳຄັນນີ້ໃນເມື່ອເພິ່ນໄດ້ເວົ້າວ່າ: "*ຕາບໍ່ສາມາດປະຕິເສດມື ເພາະວ່າຕາເຫັນວ່າມືນັ້ນໄຮ້ປໂຍດແລະບໍ່ຈຳເປັນ*". ເຊັ່ນດຽວກັນກັບຫົວບໍ່ສາມາດປະຕິເສດຕີນຢ່າງນັ້ນແຫຼະ! **<u>ອະວັຍວະທຸກພາກສ່ວນຂອງຮ່າງກາຍ (ດັ່ງດຽວກັນກັບທຸກໆສະມາຊິກໃນຄຣິສຕະຈັກ) ມີຄຸນຄ່າແລະຈຳເປັນອີງຕາມທີ່ໂປໂລໄດ້ກ່າວໄວ້.</u> ໃນ** ຮ່າງກາຍທີ່ມີສຸຂພາບດີ, ທຸກໆລະບົບທຳງານຮ່ວມກັນ, ແລະອຸປຖັມຄ້ຳຊູຊຶ່ງກັນແລະກັນ. ຄຣິສຕະຈັກທີ່ອ່ອນແອ (ສຸຂພາບບໍ່ດີ) ປຽບເໝືອນຮ່າງກາຍທີ່ມີໂຣກພູມແພ້, ເພາະວ່າກຸ່ມນຶ່ງກຳລັງໂຈມຕີອີກກຸ່ມນຶ່ງ.

| |
|---|
| ຄຣິສຕະຈັກທີ່ມີຮ່າງກາຍເຂັ້ມແຂງ (ມີສຸຂພາບດີ) ມີລັກສະນະແບບໃດ? |

ໃນຄຣິສຕຈັກທີ່ມີສຸຂພາບດີ, ສະມາຊິກທັງຫຼາຍບໍ່ພຽງແຕ່ເຮັດວຽກຮ່ວມກັນເທົ່ານັ້ນ, ແຕ່ພວກເຂົາເຈົ້າຍັງໃຫ້ຄຸນຄ່າແກ່ກັນແລະກັນ, ຍົກຍ້ອງຊົມເຊີຍຊຶ່ງກັນແລະກັນ, ແລະຂຶ້ນກັບບັນດາຄົນອື່ນໆທີ່ມີບົດບາດຕ່າງໆຈາກຕົນເອງ. <u>ທຸກໆພາກສ່ວນຂອງພຣະກາຍພຣະຄຣິດ (ຄຣິສຕຈັກ) ມີຄຸນຄ່າລາຄາແລະຈຳເປັນ(ສຳຄັນ)</u>. ບັນດາສະມາຊິກຂອງ

ຄຣິສຕຈັກເຮັດວຽກໜັກເພື່ອປະກອບສ່ວນເຂົ້າໃນການສາມັກຄີທັມທີ່ແທ້ຈິງຂອງຊາວຄຣິສຕຽນ. ການສາມັກຄີທັມດັ່ງກ່າວເຕັມໄປດ້ວຍ: ການສເລີມສລອງຄວາມຊົມຊື່ນຍິນດີຂອງຄົນອື່ນ, ຮ້ອງໄຫ້ກັບພວກເຂົາເຈົ້າໃນຍາມໂສກເສົ້າໂສກາ, ແລະຍ່າງຄຽງບ່າຄຽງໄຫຼ່ກັບພວກເຂົາເຈົ້າໃນຍາມເຈັບປວດ-ແລະພວກເຮົາຈຳເປັນຕ້ອງການການຕິດຕໍ່ພົວພັນນັ້ນເພື່ອປໂຍດຂອງການເຕີບໂຕທາງຈິດວິນຍານຂອງພວກເຮົາເອງ. ການສາມັກຄີທັມນີ້ ບາງຄັ້ງຕ້ອງໄດ້ໃຊ້ຄວາມພະຍາຍາມທີ່ສຸດ, ແຕ່ມັນກໍ່ຄຸ້ມຄ່າ. <u>**ບັນດາສະມາຊິກຄົນອື່ນໆຕ້ອງການໃຫ້ທ່ານມີສ່ວນຮ່ວມໃນຊີວິດຂອງພວກເຂົາເຈົ້າ, ແລະທ່ານເອງກໍຕ້ອງການພວກເພິ່ນໃຫ້ມີສ່ວນຮ່ວມໃນຊີວິດຂອງທ່ານເໝືອນກັນ.**</u>

| ກຸ່ມຂອງພວກເຮົາສາມາດຊ່ອຍເຫຼືອກັນແລະກັນໃຫ້ຮັບຮູ້ແລະນຳໃຊ້ພອນສວັນຂອງພວກເຮົາຢ່າງໃດ? |
|---|

## ນຳໃຊ້ໃນຊີວິດ:

ທ່ານຈະເຮັດໃຫ້ມີສ່ວນຮ່ວມກັບຜູ້ເຊື່ອອື່ນໆຫຼາຍຂຶ້ນແລະຮັບໃຊ້ພວກເຂົາເຈົ້າໄດ້ແນວໃດ?ຈົ່ງໃຊ້ນີ້ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງສົນທະນາກັບຄົນໃໝ່.** ຈົ່ງພະຍາຍາມຮູ້ຈັກໃຜຜູ້ນຶ່ງໃນຄຣິສຕະຈັກຂອງທ່ານທີ່ທ່ານຍັງບໍ່ທັນໄດ້ຮູ້ຈັກເທື່ອ ຫຼືຍັງບໍ່ທັນຮູ້ຈັກດີເທື່ອ. ຈົ່ງຕັ້ງໃຈພະຍາຍາມສ້າງມິຕພາບກັບຄົນຜູ້ນັ້ນ.
- **ຈົ່ງຟື້ນຟູສັມພັນທະພາບ.** ຖ້າຫາກທ່ານມີບັນຫາດ້ານສັມພັນທະພາບກັບໃຜຜູ້ນຶ່ງໃນຄຣິສຕະຈັກຂອງທ່ານ, ຈົ່ງພົບກັນກັບຜູ້ນັ້ນ ແລະສແວງຫາການແກ້ໄຂບັນຫານັ້ນ. ຖ້າທ່ານຈຳເປັນຕ້ອງສາຣະພາບນິສັຍທີ່ບໍ່ຖືກຕ້ອງ (ຫຼືການປະພຶດ) ຈົ່ງປະຕິບັດ, ແລະສແວງຫາການຟື້ນຟູສ້ອມແປງຄວາມສັມພັນທະພາບນັ້ນ.
- **ຈົ່ງກ້າວອອກໄປແລະຮັບໃຊ້.** ຈົ່ງໃຊ້ພາກສ່ວນຂອງເວລາພັກງານ (vacation) ຂອງທ່ານໃຫ້ທ່ານເຂົ້າໄປໃນວັທນະທັມໃໝ່ ແລະບໍຣິການຮັບໃຊ້ກຸ່ມບັນດາຄົນທີ່ທ່ານຍັງບໍ່ຮູ້ຈັກດີເທື່ອ. ຈົ່ງເປັນພາກສ່ວນຂອງພັນທະກິດຊຶ່ງໃຫ້ການບໍຣິການແກ່ພຣະກາຍຂອງພຣະຄຣິດໃນວັທນະທັມອື່ນໆ.

ກໍຫວັງວ່າມັນຄົງບໍ່ແມ່ນສະຖານະການ "**ເປັນ-ຫຼື-ຕາຍ**" ("life-or-death situation") ທີ່ພວກເຮົາຈະສຳນຶກຕຶກຕອງໄດ້ວ່າພວກເຮົາມີຄວາມຈຳເປັນທີ່ຈະຕ້ອງອາສັຍການອຸປຖັມຄ້ຳຊູແລະແນວຄິດປະດິດສ້າງຈາກຄົນອື່ນ, ແລະພວກເພິ່ນກໍ່ຈຳເປັນຕ້ອງການຢ່າງນັ້ນຈາກພວກເຮົາເຊັ່ນດຽວກັນ. <u>ແຕ່ວ່າຈະແມ່ນຊ່ວງເວລາອັຕຄັດຂັດສົນ ຫຼືເວລາຊົມຊື່ນຍິນດີມີຄວາມສຸກສຳຣານກໍຕາມ</u>, **ຄຣິສຕຈັກກະທຳພາຣະກິຈເພື່ອນຳສິ່ງທີ່ດີມາສູ່ຊຶ່ງກັນແລະກັນ** ແລະ**ເພື່ອນຳພຣະສະງ່າຣາສີມາສູ່ພຣະເຈົ້າ**.

### ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us/ ໂດຍ SSK